ສປປ ລາວ (ລຳດັບ 2 “Tier 2”)

ລັດຖະບານ ແຫ່ງ ສປປ ລາວ ຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ຕາມມາດຖານຂັ້ນຕ່ຳສຸດໃນການລຶບລ້າງຂະບວນການຄ້າມະນຸດເທື່ອ ແຕ່ເຫັນໄດ້ວ່າ ລັດຖະບານມີຄວາມພະຍາຍາມທີ່ຈະແກ້ໄຂບັນຫານີ້ ຢ່າງຈິງຈັງ. ລັດຖະບານລາວ ໄດ້ສະແດງໃຫ້ເຫັນວ່າ ໂດຍລວມແລ້ວມີຄວາມຄືບຫນ້າຫລາຍດ້ານ ເມື່ອທຽບກັບໄລຍະການລາຍງານ ຄັ້ງກ່ອນໜ້ານີ້. ດັ່ງນັ້ນ, ສປປ ລາວ ຈຶ່ງຖືກປັບຂຶ້ນໃຫ້ຢູ່ໃນລະດັບ 02 ຫຼື (TIER 2). ບັນດາຜົນງານດັ່ງກ່າວ ລວມມີ ການສືບສວນ-ສອບສວນຄະດີຄ້າມະນຸດພາຍໃນປະເທດ ຄັ້ງທຳອິດ ໂດຍຜູ້ຖືກເຄາະຮ້າຍແມ່ນຊາວຕ່າງປະເທດ ແລະ ມີການໃສ່ໂທດ ຄັ້ງທຳອິດ ສຳລັບຄະດີຄ້າມະນຸດພາຍໃນປະເທດ. ນອກຈາກນີ້, ລັດຖະບານໄດ້ເພີ່ມງົບປະມານເຂົ້າໃນການຈັດຕັ້ງ ປະຕິບັດບັນດາກິດຈະກຳຕ້ານ ແລະ ສະກັດກັ້ນການຄ້າມະນຸດ ທີ່ສອດຄ່ອງກັບແຜນງານແຫ່ງຊາດ ຫຼາຍສິມຄວນ ແລະ ຍັງມີການຮ່ວມມືກັບຂະແໜງການຢ່າງແຫນ້ນແฟ້ນ ກັບພາຍໃນຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງ ກັບພາກອົງການຈັດຕັ້ງທາງສັງຄົມ ຫລາຍຂຶ້ນ. ເຖິງຢ່າງໃດກໍຕາມ, ກໍ່ຍັງມີຫລາຍຂົງເຂດ ທີ່ຈາເປັນຕ້ອງໄດ້ເອົາໃຈໃສ່ຕື່ມ. ເຖິງ ວ່າລັດຖະບານ ຈະສ້າງຄູ່ມືການປົກປ້ອງຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ, ແຕ່ຫນ້າເສຍດາຍ ທີ່ຄູ່ມືດັ່ງກ່າວ ຍັງທັນບໍ່ໄດ້ຮັບການອະນຸມັດນຳໃຊ້ເທື່ອ ໃນໄລຍະທີ່ເກັບຂໍ້ມູນເຮັດບົດລາຍງານ. ລັດຖະບານ ຍັງຄົງສືບຕໍ່ພົບຄວາມ ທ້າທາຍໃນການກຳນົດຕົວຜູ້ທີ່ຖືກເຄາະຮ້າຍສຳລັບການຄ້າມະນຸດທີ່ເກີດຂຶ້ນພາຍໃນປະເທດ ທັງທີ່ເປັນຄົນລາວ ແລະ ຄົນຕ່າງປະເທດ ໂດຍສະເພາະ ໃນເຂດເສດຖະກິດພິເສດ, ສວນກະສິກຳ ແລະ ໃນບັນດາໂຄງການພື້ນຖານໂຄງລ່າງຂະ ໜາດໃຫຍ່ ຍັງເປັນບ່ອນທີ່ມີຄວາມສ່ຽງຫລາຍຂຶ້ນ. ນອກຈາກນີ້, ການໃຫ້ບໍລິການ ແລະ ປົກປ້ອງຜູ້ຖືກເຄາະຮ້າຍທີ່ ເປັນຜູ້ຊາຍ ຍັງເຫັນວ່າ ບໍ່ທັນພຽງພໍ. ສຸດທ້າຍ, ລັດຖະບານລາວ ຍັງສືບຕໍ່ ຫ້າມແຮງງານເຄື່ອນຍ້າຍ ບໍ່ໃຫ້ປະກອບ ອາຊີບບາງປະເພດ ເຊັ່ນ ວຽກທີ່ຕ້ອງການທັກສະສະເພາະ ເຊິ່ງການຈຳກັດນີ້ ເຮັດໃຫ້ເກີດຄວາມສ່ຽງຄື ມີແຮງງານບາງ ຄົນ ເລືອກທີ່ ຈະຫລົບຫລີກ ແລະ ໃຊ້ຊ່ອງທາງທີ່ບໍ່ເປັນທາງການ ແທນ, ແລະ ເຮັດໃຫ້ພວກເຂົາ ສາມາດຕົກເປັນ ເຫຍື່ອຂອງພວກບໍລິສັດຈັດຫາງານທີ່ບໍ່ຖືກກົດຫມາຍ ແລະ ພວກຄ້າມະນຸດ ໄດ້.

ຂໍ້ແນະນຳທີ່ເປັນບູລິມະສິດ:

ສືບຕໍ່ເພີ່ມທະວີການເຜີຍແຜ່, ຈັດຕັ້ງປະຕິບັດ ແລະ ຝຶກອົບຮົມໃຫ້ແກ່ບັນດາເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າໜ້າທີ່ຊາຍ ແດນ ກ່ຽວກັບບົດແນະນຳການປົກປ້ອງຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ, ໂດຍເນັ້ນໜັກໃສ່ ການຄຸ້ມຄອງ ກຸ່ມທີ່ມີຄວາມສ່ຽງ. • ເພີ່ມທະວີ ວິທີການການກຳນົດຕົວຜູ້ທີ່ຖືກຄ້າມະນຸດ ໃນບັນດາກຸ່ມຄົນທີ່ມີຄວາມສ່ຽງ, ໃນນີ້ ລວມ ທັງ ແຮງງານຕ່າງດ້າວ, ທີ່ກວມເອົາ ແຮງງານເກົ່າຫຼີເໜືອ ແລະ ແຮງງານລາວ ທີ່ກຳລັງເຮັດວຽກໃນຂົງເຂດໂຄງການຂະ ໜາດໃຫຍ່ກ່ຽວກັບພື້ນຖານໂຄງລ່າງ, ບໍ່ແຮ່ ແລະ ກະສິກຳ ແລະ ຜູ້ທີ່ກັບຄືນມາຈາກການໄປເຮັດວຽກຢູ່ຕ່າງປະເທດ, ຜູ້ຍິງຕ່າງດ້າວ ແລະ ຜູ້ຍິງລາວ ທີ່ຄ້າປະເວນີພາຍໃນປະເທດ. • ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ກັບເຈົ້າຫນ້າທີ່ ໃນການ

ຮັບປະກັນຄວາມປອດໄພ, ສ້າງຄວາມເປັນລະບຽບ ແລະ ຕິດຕາມກວດກາ ການຂ້າມຊາຍແດນໃນເຂດພື້ນທີ່ຫ່າງໄກ ສອກຫລີກ ຢ່າງຮັດກຸມ ເພາະນີ້ແມ່ນຊ່ອງທາງທີ່ຖືກນຳໃຊ້ຢ່າງຫລວງຫລາຍ ໂດຍແຮງງານລາວ ທີ່ກັບຈາກການໄປ ເຮັດວຽກຢູ່ຕ່າງປະເທດ ແລະ ໃຫ້ເຈົ້າຫນ້າທີ່ ສາມາດດຳເນີນການກຳນົດຕົວຜູ້ຖືກຄ້າມະນຸດໃນບັນດາກຸ່ມຄົນດັ່ງກ່າວ. • ສືບຕໍ່ຝຶກອົບຮົມໃຫ້ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວກັບປະມວນກົດໝາຍອາຍາ ຂອງ ສປປ ລາວ ສະບັບປັບປຸງ ເພື່ອເສີມສ້າງຄວາມສາມາດຂອງພວກເຂົາໃນການສືບສວນ, ດຳເນີນຄະດີ ແລະ ຕັດສິນ ລົງໂທດພວກຄ້າມະນຸດ ລວມທັງບັນດາເຈົ້າໜ້າທີ່ຜູ້ສົມຮູ້ຮ່ວມຄິດ ແລະ ນັກທ່ອງທ່ຽວທີ່ເຂົ້າມາເພື່ອຈຸດປະສົງແບບ ຊອກມີເພດສຳພັນກັບເດັກ. • ເພີ່ມທະວີການສືບສວນ, ດຳເນີນຄະດີ ແລະ ລົງໂທດໃນຄະດີການຄ້າມະນຸດ. • ສືບຕໍ່ ຮ່ວມມືກັບອົງການຈັດຕັ້ງທາງສັງຄົມ ເພື່ອປັບປຸງ ແລະ ຜັນຂະຫຍາຍການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດ ຫຼັງປີ 2020, ໂດຍເອົາໃຈໃສ່ ສັງເກດແນວໂນ້ມທີ່ມີການປ່ຽນແປງ ແລະ ຄວາມສ່ຽງຕໍ່ການຄ້າມະນຸດ. • ສືບຕໍ່ບຸກບືນ ແລະ ລົງທຶນຕື່ມໃສ່ໃນການບໍລິການ ແລະ ໃຫ້ຊ່ວຍເຫຼືອຜູ້ທີ່ຕົກເປັນເຫຍື່ອ, ແລະ ຂະຫຍາຍການບໍລິການເຫຼົ່ານັ້ນໄປ ສູ່ຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ. • ຢຸດຕິຂໍ້ກຳນົດທີ່ວ່າ ຕ້ອງໃຫ້ຜູ້ທີ່ຖືກເຄາະຮ້າຍຂໍການຊົດເຊີຍຢ່າງເປັນທາງການ ເທົ່ານັ້ນ ພວກເຂົາຈຶ່ງຈະໄດ້ຮັບຄ່າຊົດເຊີຍຈາກພວກຄ້າມະນຸດທີ່ກະທຳຕໍ່ພວກເຂົາ. • ສືບຕໍ່ປັບປຸງການເກັບກຳຂໍ້ມູນ ກ່ຽວກັບບັນດາກິດຈະກຳສະກັດກັ້ນ ແລະ ຕ້ານການຄ້າມະນຸດຂອງລັດຖະບານ, ລວມທັງລາຍລະອຽດຂອງແຕ່ລະ ຄະດີ ແລະ ຈັດສັນທາງດ້ານງົບປະມານ, ໂດຍໃຫ້ສາມາດແບ່ງປັນຂໍ້ມູນເຫຼົ່ານັ້ນກັບບັນດາກະຊວງທີ່ກ່ຽວຂ້ອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ທີ່ບໍ່ສັງກັດພາກລັດ. • ຫຼຸດຜ່ອນຂໍ້ຫຍຸ້ງຍາກ ແລະ ຂັ້ນຕອນຕ່າງໆ ໃນການເຄື່ອນຍ້າຍແຮງງານ ຢ່າງເປັນທາງການ ເຊິ່ງລວມທັງ ຍົກເລີກຂໍ້ຫ້າມປະຈຸບັນ ທີ່ບໍ່ໃຫ້ແຮງງານລາວເຮັດວຽກຊົບແມ່ບ້ານ ແລະ ຍົກເວັ້ນການ ເກັບຄ່າທຳນຽມຊອກວຽກ ທີ່ຜູ້ອອກແຮງງານຕ້ອງໄດ້ຈ່າຍ. • ເສີມສ້າງຄວາມເຂັ້ມແຂງໃຫ້ກັບບັນດາສະຖານທູດ, ກົງ ສູນໃນຕ່າງປະເທດ ເພື່ອໃຫ້ສາມາດລະບຸຕົວໃນເບື້ອງຕົ້ນ ແລະ ໃຫ້ຄວາມຊ່ວຍເຫຼືອແກ່ຄົນລາວຜູ້ທີ່ຕົກເປັນເຫຍື່ອ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການຂູດຮີດທາງເພດ ແລະ ແຮງງານ.

ການດຳເນີນຄະດີ

ລັດຖະບານມີຜົນງານຫລາຍຂຶ້ນພໍສົມຄວນໃນການບັງຄັບໃຊ້ກົດໝາຍ. ໃນເດືອນພະຈິກ 2018, ລັດຖະບານໄດ້ ປະກາດນຳໃຊ້ປະມວນກົດໝາຍອາຍາສະບັບປັບປຸງໃໝ່ ເຊິ່ງມີຜົນສັກສິດໃນປີ 2019. ມາດຕາ 215 ຂອງປະມວນ ກົດໝາຍອາຍາປີ 2018 ໄດ້ກຳນົດການຄ້າມະນຸດເພື່ອການຂູດຮີດທາງເພດ ແລະ ການຄ້າມະນຸດເພື່ອການຂູດຮີດແຮງ ງານໃຫ້ເປັນການກະທຳຜິດທາງອາຍາ ແລະ ໄດ້ເພີ່ມການໃສ່ໂທດຕັດອິດສະຫຼະພາບຜູ້ກະທຳຜິດ ເປັນ 5 ຫາ 15 ປີ ແລະ ໂທດປັບໄໝແຕ່ 10 ລ້ານ ຫາ 100 ລ້ານກີບ (1,130 ຫາ 11,28 ໂດລາ); ຖ້າວ່າການກະທຳຜິດຫາກມີຜູ້ຖືກເຄາະ ຮ້າຍທີ່ເປັນເດັກ, ໂທດປັບໄໝແມ່ນຍິ່ງເພີ່ມເປັນ 100 ລ້ານ ຫາ 500 ລ້ານກີບ (11,280 ຫາ 56,400 ໂດລາ). ການ ວາງໂທດດັ່ງກ່າວນີ້ ຖືວ່າມີຄວາມເຂັ້ມງວດພຽງພໍ ໂດຍສະເພາະແມ່ນຕໍ່ກັບຄະດີການຄ້າມະນຸດເພື່ອຂູດຮີດທາງເພດ ແມ່ນຖືວ່າທຽບເທົ່າກັບການວາງໂທດຕໍ່ກັບການກະທຳອາຊະຍາກຳຮ້າຍແຮງອື່ນໆ ເຊັ່ນ ຄະດີຂົ່ມຂືນ.

ໃນປີ 2019, ກົມຕ້ານການຄ້າມະນຸດ (ATD) ທີ່ນອນຢູ່ໃນກະຊວງປ້ອງກັນຄວາມສະຫງົບ ລາຍງານວ່າ ມີການສືບສວນ 32 ກໍລະນີທີ່ກ່ຽວຂ້ອງກັບການຄ້າມະນຸດ (ມີ 39 ກໍລະນີໃນປີ 2018), ສິ່ງຜົນໃຫ້ມີການເປີດການສືບສວນຄະດີການຄ້າມະນຸດຈຳນວນ 14 ຄະດີ (ມີ 26 ຄະດີ ໃນປີ 2018). ໃນຊ່ວງທ້າຍປີ, ຍັງຄົງມີການສືບສວນ 12 ກໍລະນີທີ່ກຳລັງຖືກດຳເນີນການ (ມີ 18 ກໍລະນີໃນປີ 2018). 2 ກໍລະນີທີ່ກຳລັງຖືກດຳເນີນຄະດີກັບ ຜູ້ຖືກຫາຄ້າມະນຸດ 5 ຄົນ ທີ່ໄດ້ສະແຫວງຜົນປະໂຫຍດກັບ ຜູ້ຖືກເຄາະຮ້າຍຄົນຫວຽດນາມ 10 ຄົນ—ຖືວ່າເປັນຄັ້ງທຳອິດ ທີ່ລັດຖະບານໄດ້ມີການສືບສວນກໍລະນີຄ້າມະນຸດ ທີ່ມີຜູ້ຖືກເຄາະຮ້າຍເປັນຊາວຕ່າງຊາດ ຢູ່ໃນ ສປປ ລາວ. ເຈົ້າໜ້າທີ່ໄດ້ດຳເນີນການຕາມກົດໝາຍຕໍ່ກັບຜູ້ຖືກສົງໄສຄ້າມະນຸດຈຳນວນ 25 ຄົນ ໃນ 14 ຄະດີການຄ້າມະນຸດ, ເຊິ່ງເຫັນວ່າ ມີຫລາຍຂຶ້ນເມື່ອທຽບກັບ ປີ 2018 ທີ່ມີ 12 ຄະດີ. ລັດຖະບານຍັງໄດ້ຕັດສິນການກະທຳຜິດຕໍ່ກັບຜູ້ຄ້າມະນຸດຈຳນວນ 18 ຄົນ ໃນ 12 ຄະດີ (10 ຄະດີຄ້າມະນຸດ ແລະ 2 ຄະດີຂູດຮີດແຮງງານ ໂດຍມີຜູ້ຖືກເຄາະຮ້າຍທັງຫມົດ 33 ຄົນ ເຊິ່ງໃນນັ້ນ ມີ 10 ຄົນ ທີ່ເປັນເດັກຕ່ຳກວ່າ 18 ປີ), ທຽບກັບປີ 2018 ທີມີການຕັດສິນການກະທຳຜິດຕໍ່ກັບຜູ້ຄ້າມະນຸດຈຳນວນ 27 ຄົນ ໃນ 11 ຄະດີ. ນີ້ຖືວ່າເປັນຄັ້ງທຳອິດ ທີ່ລັດຖະບານ ໄດ້ຕັດສິນລົງໂທດຄະດີການຂູດຮີດທາງເພດພາຍໃນປະເທດ. ສານໄດ້ຕັດສິນວາງໂທດຕັດອິດສະຫຼະພາບຕໍ່ພວກຄ້າມະນຸດ ເຊິ່ງມີໂທດຕັ້ງແຕ່ 2 ປີ 6 ເດືອນ ຫາ 18 ປີ ແລະ ໂທດປັບໄໝແມ່ນເລີ້ມແຕ່ 5 ລ້ານ ຫາ 120 ລ້ານ (560 ຫາ 13,540 ໂດລາ). ສານຍັງໄດ້ອອກຄຳສັ່ງຍຶດຊັບສິນ ຈຳນວນ 113.54 ລ້ານກີບ (12,810 ໂດລາ) ແລະ 20,600 ຫຍວນ (2,960 ໂດລາ) ຈາກພວກຄ້າມະນຸດ ແລະ ໄດ້ມອບເງິນຊົດເຊີຍໃຫ້ແກ່ຜູ້ທີ່ຖືກເຄາະຮ້າຍໃນ 6 ຄະດີ ໃນໄລຍະປີ 2019 ເປັນຈຳນວນເງິນ 281 ລ້ານ (31,700 ໂດລາ). ໃນປີນີ້, ລັດຖະບານບໍ່ໄດ້ໃຫ້ຂໍ້ມູນກ່ຽວກັບການດຳເນີນຄະດີຕໍ່ກັບຊາວຕ່າງຊາດ ທີ່ມີສ່ວນກ່ຽວຂ້ອງກັບການທ່ອງທ່ຽວເພື່ອມີເພດສຳພັນກັບເດັກ.

ບັນດາເຈົ້າໜ້າທີ່ສືບຕໍ່ພັດທະນາບັນດາຄູ່ມືຄຸ້ມຄອງຄະດີການຄ້າມະນຸດ ແລະ ຝຶກອົບຮົມຢ່າງລົງເລິກໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ລວມທັງໃນລະດັບຂັ້ນແຂວງ, ສະໜອງງົບປະມານໂດຍກົງໃຫ້ແກ່ການຝຶກອົບຮົມເຫຼົ່ານີ້ ແລະ ໃນຂະນະດຽວກັນກໍ່ຮ່ວມມືກັບອົງການຈັດຕັ້ງສາກົນ. ລັດຖະບານໄດ້ຮ່ວມມືກັບ ປະເທດຈີນ, ໄທ ແລະ ຫວຽດນາມ ອີງຕາມສັນຍາສອງຝ່າຍທີ່ມີຢູ່ ກ່ຽວກັບການແບ່ງປັນຂໍ້ມູນ, ການສືບສວນຄະດີ ແລະ ການລົງໂທດ. ເຈົ້າໜ້າທີ່ແຂວງຫຼວງພະບາງ, ເຈົ້າໜ້າທີ່ຂັ້ນສູນກາງ ແລະ ເຈົ້າໜ້າທີ່ປະເທດຫວຽດນາມ ໄດ້ປະສານງານ ແລະ ຮ່ວມມືກັນຊ່ວຍເຫລືອກຸ່ມຜູ້ຖືກເຄາະຮ້າຍຈາກການຂູດຮີດທາງເພດ ຢູ່ ສ ປປ ລາວ. ນອກຈາກນັ້ນ, ໂດຍການຊ່ວຍເຫຼືອຈາກປະເທດໄທ, ລັດຖະບານ ສາມາດຈັບກຸມ ແລະ ໃສ່ໂທດນາຍໜ້າຄົນລາວ ໃນຄະດີຄ້າມະນຸດຂູດຮີດແຮງງານລາວ ແລະ ໃຫ້ມີການມອບເງິນຊົດເຊຍແກ່ຜູ້ຖືກເຄາະຮ້າຍດັ່ງກ່າວ. ນອກຈາກນີ້, ມີຫຼາຍແຂວງ ແລະ ເມືອງ ທີ່ມີບົດບັນທຶກຄວາມເຂົ້າໃຈ (MOUs) ເພື່ອສົ່ງເສີມການຮ່ວມມື ກັບ ຝ່າຍປະເທດໄທ. ໃນບາງເຂດ ຍັງມີລາຍງານວ່າ ເຫັນເຈົ້າໜ້າທີ່ຂັ້ນນ້ອຍຈຳນວນໜຶ່ງ ຍັງຮັບສິນບົນຈາກຜູ້ກະທຳຜິດໃນການຄ້າມະນຸດ ເພື່ອອຳນວຍຄວາມສະດວກໃນການກວດຄົນເຂົ້າ-ອອກເມືອງ ແລະ ການຂົນສົ່ງເດັກຍິງ ໄປ ສປ ຈີນ, ເຖິງຢ່າງໃດກໍ່ຕາມ, ລັດຖະບານລາວ ບໍ່ໄດ້ໃຫ້ຂໍ້ມູນໃນບົດລາຍງານ ວ່າ

ມີດຳເນີນການສືບສວນ-ສອບສວນ, ດຳເນີນຄະດີ, ລົງໂທດຕໍ່ເຈົ້າໜ້າທີ່ ທີ່ກະທຳຄວາມຜິດໃນການສົມຮູ້ຮ່ວມຄິດຄະດີການຄ້າມະນຸດ ແລະ ຄະດີອື່ນໆທີ່ກ່ຽວຂ້ອງກັບການຄ້າມະນຸດໃນໄລຍະປີຜ່ານມາ.

ການປົກປ້ອງ

ລັດຖະບານຈັດຕັ້ງປະຕິບັດວຽກການປົກປ້ອງຜູ້ຖືກເຄາະຮ້າຍ ໄດ້ດີສົມຄວນ. ໂດຍມີການປຶກສາຫາລືກັບບັນດາອົງການຈັດຕັ້ງທາງສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຢ່າງຄັກແນ່, ລັດຖະບານ ສ້າງຄູ່ມືການປົກປ້ອງຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ເພື່ອໃຫ້ມີລະບົບຂັ້ນຕອນປົກປ້ອງແບບເປັນເອກະພາບ ສຳລັບວຽກສົ່ງຕໍ່ຜູ້ຖືກເຄາະຮ້າຍ ແລະ ເພື່ອຮັບປະກັນການສະໜອງການບໍລິການ ແລະ ໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບຄວາມຍຸຕິທຳ. ເຖິງຢ່າງໃດກໍຕາມ, ລັດຖະບານຍັງບໍ່ທັນໄດ້ອະນຸມັດຄູ່ມືດັ່ງກ່າວ ໃນໄລຍະທີ່ເຮັດບົດລາຍງານປີນີ້. ກົມຕ້ານການຄ້າມະນຸດ (ATD), ຕຳຫຼວດ ແລະ ເຈົ້າໜ້າທີ່ຊາຍແດນ ປະຈຳການຢູ່ຕາມພື້ນທີ່/ຊຸມຊົນທີ່ມີຄວາມສ່ຽງ ສືບຕໍ່ນຳໃຊ້ຄູ່ມືການກຳນົດຕົວທີ່ມີໃນປະຈຸບັນ. ລັດຖະບານໄດ້ເພີ່ມມາດຕະການກຳນົດຕົວຜູ້ຖືກເຄາະຮ້າຍພາຍໃນ ສປປລາວ ແລະ ບັນດາແຮງງານທີ່ກັບຄືນປະເທດ ແລະ ສົ່ງຕໍ່ ແລະ ໃຫ້ການຊ່ວຍເຫລືອແກ່ພວກເຂົາ. ເຖິງຢ່າງໃດກໍຕາມ, ການຂາດວິທີການກຳນົດຕົວ ແລະ ການສົ່ງຕໍ່ຢ່າງສະໝ່ຳສະເໝີ ຍັງເປັນອຸປະສັກຕໍ່ການຕໍ່ສູ້ກັບການຄ້າມະນຸດ. ໃນປະຈຸບັນ, ກົມຕ້ານການຄ້າມະນຸດ (ATD) ຂັ້ນສູນກາງ ແມ່ນອົງການດຽວ ທີ່ສາມາດກຳນົດຕົວຜູ້ຖືກເຄາະຮ້າຍການຄ້າມະນຸດໄດ້. ແຕ່ໃນການປະຕິບັດຕົວຈິງ, ຕຳຫຼວດຂັ້ນແຂວງ, ຕຳຫຼວດ ຕ.ມ. , ເຈົ້າໜ້າທີ່ຂັ້ນບ້ານ, ສະຫະພັນແມ່ຍິງ (LWU), ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGO) ກໍ່ສາມາດກຳນົດຕົວ ແລະ ລາຍງານກໍລະນີຕ່າງໆເຖິງ ກົມຕ້ານການຄ້າມະນຸດ (ATD) ໄດ້. ຢູ່ຕ່າງປະເທດ, ເຈົ້າໜ້າທີ່ການທູດຂອງລາວ ມີຫນ້າທີ່ຮັບຜິດຊອບກຳນົດຕົວ ແລະ ລາຍງານກໍລະນີຕ່າງໆເຖິງ ATD ຫຼື ກະຊວງການຕ່າງປະເທດ; ໃນບົດລາຍງານໄດ້ເວົ້າວ່າ ບັນດາເຈົ້າໜ້າທີ່ການທູດ ສືບຕໍ່ນຳໃຊ້ຄູ່ມືກຳນົດຕົວຢ່າງເປັນປະຈຳ. ເຖິງຢ່າງໃດກໍຕາມ, ກົມຕ້ານການຄ້າມະນຸດ (ATD) ອາດບໍ່ໄດ້ນັບ ຫຼື ຕິດຕາມຜູ້ຖືກເຄາະຮ້າຍທີ່ປະຕິເສດການຊ່ວຍເຫຼືອຢ່າງເປັນທາງການ. ບັນດາເຈົ້າໜ້າທີ່ຢູ່ປະເທດໃກ້ຄຽງ ຍັງເຮັດໜ້າທີ່ ເປັນຜູ້ກຳນົດຕົວຜູ້ຖືກເຄາະຮ້າຍຄົນລາວຢູ່ຕ່າງປະເທດ ເປັນສ່ວນໃຫຍ່.

ເຊັ່ນດຽວກັບປີ 2018, ລັດຖະບານບໍ່ໄດ້ລາຍງານກ່ຽວກັບຕົວເລກທີ່ຈະແຈ້ງຂອງຜູ້ເຄາະຮ້າຍທີ່ໄດ້ຖືກກຳນົດຕົວ (86 ຄົນ ໃນປີ 2017). ເຖິງຢ່າງໃດກໍ່ຕາມ, ສະຫະພັນແມ່ຍິງລາວ ໄດ້ລາຍງານວ່າ ໄດ້ຊ່ວຍເຫລືອ ແລະ ໃຫ້ທີ່ພັກອາໄສແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈຳນວນ 39 ຄົນ ໃນລະຫ່ວາງປີ 2019 (52 ຄົນ ໃນປີ 2018). ຈາກຈຳນວນຜູ້ຖືກເຄາະຮ້າຍ 39 ຄົນ, 35 ເປັນຍິງ, 4 ຊາຍ, ຜູ້ທີ່ຖືກເຄາະຮ້າຍຈາກການຂູດຮີດທາງເພດ ຈຳນວນ 34 ຄົນ ແລະ ຜູ້ທີ່ຖືກເຄາະຮ້າຍຈາກການຂູດຮີດແຮງງານ ມີຈຳນວນ 5 ຄົນ. ຜູ້ສັງເກດການລາຍງານວ່າສູນພັກເຊົາຊົ່ວຄາວທີ່ບໍ່ຂຶ້ນກັບລັດຖະບານ ຍັງຊ່ວຍເຫຼືອຜູ້ຖືກເຄາະຮ້າຍອີກ ຈຳນວນ 9 ຄົນ ເຊິ່ງໃນຈຳນວນນີ້ 6 ຄົນແມ່ນແມ່ຍິງ ແລະ 3 ຄົນ ແມ່ນຜູ້ຊາຍ ເຊິ່ງອາດແມ່ນ ຜູ້ຖືກເຄາະຮ້າຍຈາກການຂູດຮີດແຮງງານ. ກົດໝາຍວ່າດ້ວຍການຕ້ານການຄ້າ

ມະນຸດສະບັບປີ 2016 ໄດ້ກຳນົດສິດຂອງຜູ້ຖືກເຄາະຮ້າຍຕໍ່ການໄດ້ຮັບທີ່ພັກເຊົາຊົ່ວຄາວ, ການໄດ້ຮັບຄຳປຶກສາທາງດ້ານກົດໝາຍ, ການດູແລສຸຂະພາບ, ການສຶກສາ ຫຼື ການຝຶກອົບຮົມວິຊາຊີບ ແລະ ຄວາມຊ່ວຍເຫຼືອທາງການເງິນ ເພື່ອການກັບຄືນສູ່ສັງຄົມຂອງພວກເຂົາ ບໍ່ວ່າຈະແມ່ນເພດໃດ ແລະ ສັນຊາດໃດ; ເຖິງຢ່າງໃດກໍຕາມ, ໃນພາກປະຕິບັດຕົວຈິງ, ການບໍລິການ ແລະ ສູນພັກເຊົາຊົ່ວຄາວ ໃຫ້ແກ່ຜູ້ຊາຍຍັງບໍ່ພຽງພໍ. ຜູ້ຖືກເຄາະຮ້າຍຈຳນວນໜຶ່ງໄດ້ຮັບຄວາມຊ່ວຍເຫຼືອ ໂດຍການຊົດເຊີຍຄືນຜ່ານຂະບວນການຍຸຕິທຳທາງອາຍາ; ເຖິງຢ່າງໃດກໍ່ຕາມ, ສານບໍ່ໄດ້ຕັດສິນການຢຽວຢາ ຫຼື ຊົດເຊີຍ ນອກຈາກວ່າຜູ້ຖືກເຄາະຮ້າຍ ຫຼື ທະນາຍຄວາມໄດ້ມີການຮ້ອງຂໍແບບສະເພາະເຈາະຈົງ. ລັດຖະບານລາຍງານວ່າຜູ້ຖືກເຄາະຮ້າຍ ອາດຮຽກຮ້ອງເອົາຄ່າຊົດເຊີຍທາງແພ່ງ ແລະ ຂະບວນການທາງແພ່ງນີ້ ສາມາດເຮັດພ້ອມກັບການດຳເນີນຄະດີອາຍາ. ໂດຍສະເພາະໃນປີ 2019, ເຈົ້າໜ້າຢູ່ບາງແຂວງພາກເໜືອ ແລະ ພາກໃຕ້ ແລະ ສູນກາງ ໄດ້ສ້າງບັນດາຂັ້ນຕອນ ແລະ ບົດບັນທຶກຄວາມເຂົ້າໃຈ (MOU) ກັບບັນດາໜ່ວຍງານທີ່ກ່ຽວຂ້ອງໃນປະເທດເພື່ອນບ້ານ ເພື່ອກວດກາແຮງງານທີ່ເດີນທາງກັບມາຈາກປະເທດໄທ ແລະ ບາງກໍລະນີ ທີ່ມາຈາກປະເທດຈີນ ເພື່ອກວດຄົ້ນການຄ້າມະນຸດ ແລະ ສິ່ງຕໍ່ຜູ້ຖືກເຄາະຮ້າຍ. ເຖິງຢ່າງໃດກໍຕາມ, ລັດຖະບານຍັງຄົງບໍ່ມີຂັ້ນຕອນກວດ ແລະ ສິ່ງຕໍ່ຄັ່ງກ່າວ ໃນສວນຢາງພາລາ ແລະ ສວນກ້ວຍ ທີ່ມີຄົນຕ່າງຊາດເປັນເຈົ້າຂອງ, ເຂດເສດຖະກິດພິເສດ ແລະ ເຂດກໍ່ສ້າງທາງລົດໄຟລາວ-ຈີນ ແລະ ໂຮງງານຕັດຫຍິບ ລວມທັງການກວດລ້າງສະຖານບັນເທີງ, ຮ້ານບາ ແລະ ຮ້ານກິນດື່ມ. ສານປະຊາຊົນສູງສຸດ ສືບຕໍ່ອະນຸຍາດໃຫ້ຜູ້ຖືກເຄາະຮ້າຍໃຫ້ການ ຢູ່ຫຼັງຜ້າກັ້ງເພື່ອປົກປ້ອງຄວາມເປັນສ່ວນຕົວ ແລະ ຮັບປະກັນຄວາມປອດໄພຂອງພວກເຂົາ. ລັດຖະບານໄດ້ລາຍງານວ່າ ໄດ້ຈັດງົບປະມານໃນການສົ່ງຕົວກັບຄືນປະເທດຂອງຜູ້ຖືກເຄາະຮ້າຍຕ່າງປະເທດ ໃນປີ 2019 ແລະ ບໍ່ໄດ້ໃຫ້ລາຍລະອຽດ.

ການປ້ອງກັນ

ລັດຖະບານໄດ້ເພີ່ມທະວີຄວາມພະຍາຍາມໃນການປ້ອງກັນການຄ້າມະນຸດ. ເປັນຄັ້ງທຳອິດ, ທີ່ ລັດຖະບານໄດ້ລາຍງານກ່ຽວກັບງົບປະມານສຳລັບກິດຈະກຳວຽກງານສະກັດກັ້ນການຄ້າມະນຸດອີງຕາມແຜນປະຕິບັດງານແຫ່ງຊາດ ເຊິ່ງມີການລາຍງານວ່າ ງົບປະມານໃນໄລຍະ 2018-2019 ເພີ່ມຂຶ້ນເປັນ 3 ເທົ່າ ຫລື ປະມານ 300 ລ້ານກີບ (33,840 ໂດລາ) ຕໍ່ກະຊວງ ເຊິ່ງໃນນີ້ກວມເອົາ ທຶນຊ່ວຍເຫຼືອຈາກຕ່າງປະເທດ. ນອກຈາກນີ້, ບັນດາກະຊວງສາມາດສະເໜີຂໍທຶນຫຼາຍກວ່າຈຳນວນນີ້ໄດ້ ຫາກມີຄວາມຈຳເປັນ; ເຖິງຢ່າງໃດກໍຕາມ, ລັດຖະບານ ບໍ່ໄດ້ລາຍງານຈຳນວນງົບປະມານລວມສຳລັບວຽກງານສະກັດກັ້ນການຄ້າມະນຸດ ທັງໝົດ. ຄະນະກຳມະການຊີ້ນຳລະດັບຊາດດ້ານການຕ້ານການຄ້າມະນຸດ ແລະ ກອງເລຂາຕ້ານການຄ້າມະນຸດ ດຳເນີນກາ່ນປະຊຸມຢ່າງເປັນປົກກະຕິ ແລະ ນຳພາວຽກງານສະກັດກັ້ນການຄ້າມະນຸດ ຢ່າງຫ້າວຫັນ. ມີດຳລັດນາຍົກລັດຖະມົນຕີປີ 2018 ກ່ຽວກັບການສ້າງຕັ້ງຄະນະກຳມະການຊີ້ນຳວຽກງານສະກັດກັ້ນການຄ້າມະນຸດໂດຍປະກອບມີຕົວແທນຈາກຫຼາຍພາກສ່ວນໃນຂັ້ນແຂວງ ແລະ ເມືອງ ເພື່ອຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2016, ແລະ ແຜນປະຕິບັດງານແຫ່ງຊາດ ຖືເປັນບູລິມະສິດ ໃນການປະຕິບັດວຽກງານ. ລັດຖະບານ ໄດ້ລາຍງານວ່າ ສ້າງຕັ້ງຄະນະກຳມະການ ໄດ້ຄົບທັງໝົດ 18 ແຂວງ ແລະ 12

ແຂວງສາມາດສ້າງຕັ້ງຄະນະໄດ້ລະດັບເມືອງ ແລະ ແຕ່ງຕັ້ງພະນັກງານທີ່ມີປະສົບການເຮັດວຽກກ່ຽວການຄ້າມະນຸດ ເຂົ້າຢູ່ໃນຄະນະກຳມະການ. ເຖິງຢ່າງໃດກໍ່ຕາມ, ການປະສານງານລະຫວ່າງເຈົ້າໜ້າທີ່ສູນກາງ ແລະ ຂັ້ນແຂວງ ຍັງມີສິ່ງທ້າທາຍ; ໃນຂະນະດຽວກັນ, ເຫັນໄດ້ວ່າ ການປະສານງານກັບອົງການຈັດຕັ້ງທາງສັງຄົມ ດີຂຶ້ນກວ່າເກົ່າ ເຊັ່ນ ມີການປະຊຸມຝຶກອົບຮົມຮ່ວມກັນ, ຈັດກອງປະຊຸມປຶກສາຫາລື ແລະ ຮ່ວມມືຕ່າງໆ ທັງໃນລະດັບຊາດ ແລະ ຂັ້ນແຂວງ. ການຮ່ວມມືກັບອົງການຈັດຕັ້ງທາງສັງຄົມ ເຫັນໄດ້ຈາກຂະບວນການສ້າງແຜນປະຕິບັດງານແຫ່ງຊາດ ແລະ ຄູ່ມືການປົກປ້ອງຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ຖືກເຄາະຮ້າຍ ແລະ ລວມທັງການກວດກາແຮງງານທີ່ກັບຈາກປະເທດໄທຜ່ານດ່ານຊາຍແດນພາກໃຕ້. ແຕ່ສຳລັບການຂໍອະນຸມັດເຮັດກິດຈະກຳຕ່າງໆຍັງບໍ່ທັນສະດວກ ແລະ ມີຂໍ້ຈຳກັດຕ່າງໆໃນການອະນຸມັດໂຄງການທຶນສາກົນ.

ບັນດາສື່ມວນຊົນທີ່ຂຶ້ນກັບລັດຖະບານ ໄດ້ລາຍງານກ່ຽວກັບບັນດາຄະດີການຄ້າມະນຸດ ແລະ ຜົນງານຂອງວຽກງານສະກັດກັ້ນການຄ້າມະນຸດ ແລະ ເຈົ້າໜ້າທີ່ລັດ ທັງສູນກາງ ແລະ ຂັ້ນແຂວງ ໄດ້ຈັດວຽກງານໂຄສະນາເຜີຍແຜ່ເພື່ອສ້າງຄວາມຮັບຮູ້ກ່ຽວກັບການຄ້າມະນຸດ ຫຼາຍຄັ້ງ ແນໃສ່ເຂົ້າເຖິງຜູ້ເຂົ້າຮ່ວມຫຼາຍສິບພັນຄົນ. ລັດຖະບານຍັງໃຫ້ທຶນເຮັດກິດຈະກຳປຸກຈິດສຳນຶກ ເຊັ່ນ ສ້າງຄູ່ມືວ່າດ້ວຍການຕ້ານການທ່ອງທ່ຽວເພື່ອຈຸດປະສົງມີເພດສຳພັນກັບເດັກ ແລະ ຈັດກອງປະຊຸມວ່າດ້ວຍເຄື່ອນຍ້າຍແຮງງານຢ່າງປອດໄພ ໃຫ້ແກ່ເຈົ້າໜ້າທີ່ຂັ້ນເມືອງຈຳນວນໜຶ່ງ. ກະຊວງສຶກສາທິການ ແລະ ກີລາ ໄດ້ນຳເອົາຫົວຂໍ້ວິຊາກ່ຽວກັບການຄ້າມະນຸດເຂົ້າໃນຫຼັກສູດໂຮງຮຽນປະຖົມ. ອົງການຈັດຕັ້ງລັດຖະບານ 3 ແຫ່ງ ລວມທັງ ສະຫະພັນແມ່ຍິງ ມີສາຍດ່ວນ ເຊິ່ງແຕ່ລະແຫ່ງມີສາຍເຂົ້າ 2 ສາຍຕໍ່ມື້ ໂດຍສະເລ່ຍ; ເຖິງຢ່າງໃດກໍ່ຕາມ, ພະນັກງານສາຍດ່ວນສ່ວນຫຼາຍ ຍັງບໍ່ສາມາດໃຫ້ການຊ່ວຍເຫຼືອ ຫຼື ຕິດຕາມຢ່າງມີປະສິດທິຜົນ ແລະ ປະຊາຊົນທົ່ວໄປກໍ່ຍັງບໍ່ຮູ້ຈັກ. ລັດຖະບານໄດ້ເລີ່ມປະເມີນຜົນການຈັດຕັ້ງປະຕິບັດແຜນງານແຫ່ງຊາດ 2016-2020 ແລະ ພິຈະລະນາຄຳຄິດເຫັນຕ່າງໆ ຈາກການປຶກສາຫາລືກັບອົງການຈັດຕັ້ງທາງສັງຄົມ ສຳລັບແຜນງານຊຸດໃໝ່ 2021-2025. ເຖິງຢ່າງໃດກໍ່ຕາມ, ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານຊຸດປະຈຸບັນ ຍັງບໍ່ມີການເຜີຍແຜ່ໃນວົງກ້ວາງ.

ບາງລະບຽບການທີ່ສ້າງຂຶ້ນເພື່ອປ້ອງກັນການຄ້າມະນຸດ, ໃນຄວາມເປັນຈິງແລ້ວ ອາດຈະເພີ່ມຄວາມສ່ຽງໃຫ້ກັບແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດ. ຕົວຢ່າງ ລະບຽບການຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ຈຳກັດປະເພດການຈ້າງງານ (ເຊັ່ນ ອາຊີບແມ່ບ້ານ) ສຳລັບແຮງງານລາວທີ່ຈະໄປເຮັດວຽກຢູ່ຕ່າງປະເທດນັ້ນ ອາດຈະເປັນການຊຸກຍູ້ໃຫ້ແຮງງານຈຳນວນໜຶ່ງ ຫລົບຫລີກ ແລະ ເລືອກເສັ້ນທາງອອກນອກປະເທດຜ່ານຊ່ອງທາງທີ່ບໍ່ຖືກກົດຫມາຍ ເຊິ່ງເປັນການເພີ່ມຄວາມສ່ຽງຂອງພວກເຂົາໃນການຕົກເປັນເຫຍື່ອຂອງຕົວແທນນອກລະບົບ ແລະ ພວກຄ້າມະນຸດໄດ້. ອີກດ້ານໜຶ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີການຄຸ້ມຄອງຕົວແທນ/ບໍລິສັດຈັດຫາງານຈຳນວນ 24 ແຫ່ງ ທີ່ໄດ້ຮັບອະນຸຍາດໃຫ້ຮັບ ແລະ ຈັດຫາງານໃຫ້ແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ແບບຖືກກົດຫມາຍ. ຕົວແທນ/ບໍລິສັດຈັດຫາງານເຫຼົ່ານີ້ ເຮັດໜ້າທີ່ເປັນຜູ້ເຝົ້າຍາມປະຕູ ສຳລັບຂະບວນການເຄື່ອນຍ້າຍແຮງງານຢ່າງເປັນທາງການ ຢູ່ ສປປ ລາວ. ແຕ່ວ່າ ກົດໝາຍຂອງ ສປປ ລາວ ຍັງອະນຸຍາດໃຫ້ຕົວແທນ/ບໍລິສັດຈັດຫາງານ

ເຫຼົ່ານີ້ເກັບຄ່າທຳນຽມການຈັດຫາງານຕ່າງໆຈາກຜູ້ອອກແຮງງານໄດ້. ບົດບັນທຶກຄວາມເຂົ້າໃຈ (MOU) ການຮ່ວມມືດ້ານການຈັດຫາງານ ກັບ ລັດຖະບານປະເທດໄທ ເຊິ່ງຍັງມີຜົນສັກສິດຢູ່ ໄດ້ກຳນົດກ່ຽວກັບຂະບວນການເຄື່ອນຍ້າຍແຮງງານຢ່າງເປັນທາງການ ແຕ່ຄ່າໃຊ້ຈ່າຍຍັງສູງຫຼາຍສຳລັບຜູ້ອອກແຮງງານ (ໃຫ້ມີການເກັບເງິນເວລາຖືກສົ່ງຕົວກັບ ແລະ ເກັບຄ່າອື່ນໆ), ສ້າງຄວາມສັບສົນ ແລະ ໃຊ້ເວລາຫຼາຍ. ດັ່ງນັ້ນ, ຂະບວນການທີ່ປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ (MOU) ດັ່ງກ່າວ ບໍ່ສາມາດຢຸດການເຄື່ອນຍ້າຍແຮງງານແບບບໍ່ຖືກກົດໝາຍ ເຖິງແມ່ນວ່າຂະບວນການຕາມ MOU ຈະນຳໄປສູ່ການໄດ້ຮັບເງິນຄ່າຈ້າງທີ່ສູງຂຶ້ນ ແລະ ເວລາເຮັດວຽກທີ່ໜ້ອຍກວ່າ ກ່ຕາມ. ບົດສຶກສາໜຶ່ງທີ່ດຳເນີນໂດຍອົງການຈັດຕັ້ງສາກົນ ໃນປີ 2018 ພົບວ່າ ບັນດາສູນຈັດຫາງານຕ່າງໆໄດ້ສົ່ງຕໍ່ຄ່າທຳນຽມໄປຍັງຜູ້ທີ່ຈະໄປເຮັດວຽກ (ແຮງງານ), ແຮງງານຫຼາຍຄົນຍັງບໍ່ເຂົ້າໃຈເນື້ອໃນສັນຍາທີ່ພວກເຊັນກັບບັນດາສູນຈັດຫາງານ ແລະ ນາຍຈ້າງຄົນໄທບາງຈຳນວນ ຍຶດໜັງສືເດີນທາງຂອງແຮງງານ ເຊິ່ງທັງໝົດເຫຼົ່ານີ້ເປັນການເພີ່ມຄວາມສ່ຽງການຄ້າມະນຸດໃຫ້ແກ່ພວກເຂົາ. ລັດຖະບານບໍ່ໄດ້ຈັດການຝຶກອົບຮົມກ່ຽວກັບການຄ້າມະນຸດ ໃຫ້ພະນັກງານການທູດໃນໄລຍະຂອງການລາຍງານນີ້ ເຖິງແມ່ນວ່າໄດ້ຈັດການຝຶກອົບຮົມກ່ຽວກັບການແຕ່ງງານແອບແຝງ ແລະ ການຄ້າມະນຸດໃຫ້ເຈົ້າໜ້າທີ່ຢູ່ປະເທດຈີນໃນປີກ່ອນໜ້ານີ້. ທູດແຮງງານຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ປະຈຳຢູ່ປະເທດໄທ ຍັງຄົງສືບຕໍ່ກວດກາຕິດຕາມບັນດາສະຖານທີ່ເຮັດວຽກ ແຕ່ວ່າ ລັດຖະບານບໍ່ໄດ້ລາຍງານວ່າ ທູດແຮງງານໄດ້ຮັບການຝຶກອົບຮົມກ່ຽວກັບການກຳນົດຕົວ ແລະ ສົ່ງຕໍ່ກໍລະນີການຄ້າມະນຸດ. ການລົງທະບຽນແຈ້ງເກີດ ແລະ ອອກປື້ມສຳມະໂນຄົວ ແລະ ເອກະສານທາງແພ່ງ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ ຍັງມີຈຳກັດ ແລະ ອາດເຮັດໃຫ້ເພີ່ມຄວາມສ່ຽງໃນການຄ້າມະນຸດ.

ຂໍ້ມູນກ່ຽວກັບການຄ້າມະນຸດ

ຕາມການລາຍງານໃນຊ່ວງໄລຍະຫ້າປີຜ່ານມາ, ພວກຄ້າມະນຸດໄດ້ຂູດຮີດຜູ້ຖືກເຄາະຮ້າຍທີ່ເປັນຄົນລາວ ແລະ ຊາວຕ່າງດ້າວໃນປະເທດລາວ ແລະ ລວມທັງ ຜູ້ຖືກເຄາະຮ້າຍທີ່ເປັນຄົນລາວໃນຕ່າງປະເທດ. ສປປ ລາວ ແມ່ນປະເທດຕົ້ນທາງຂອງການຄ້າມະນຸດ ໂດຍສະເພາະ ກັບ ປະເທດໄທ ແລະ ຈີນ ລວມທັງຫວຽດນາມ ແລະ ມາເລເຊຍ. ພວກຄ້າມະນຸດໄດ້ສະແຫວງຫາຜົນປະ�โຫຍດຈາກຜູ້ຖືກເຄາະຮ້າຍທີ່ເປັນຄົນລາວຈຳນວນຫຼວງຫຼາຍ ໂດຍສະເພາະແມ່ນແມ່ຍິງ ແລະ ເດັກຍິງ ເຊິ່ງໃນນັ້ນລວມມີທັງການບັງຄັບໃຫ້ຂາຍບໍລິການທາງເພດ ແລະ ຖືກບັງຄັບໃຫ້ເຮັດວຽກໃນເຮືອນ, ໂຮງງານ ຫຼື ໃນຂົງເຂດວຽກງານກະສິກຳ ແລະ ບາງກໍລະນີ ຖືກຂາຍເພື່ອໄປເປັນເຈົ້າສາວທີ່ປະເທດຈີນ ແລະ ຖືກສົ່ງຕໍ່ເຂົ້າສູ່ຂະບວນການຄ້າມະນຸດເພື່ອການຂູດຮີດທາງເພດ ຫຼື ຖືກບັງຄັບໃຫ້ເປັນຂ້າທາດຮັບໃຊ້ໃນເຮືອນ. ພວກຄ້າມະນຸດໄດ້ສະແຫວງຫາຜົນປະ�โຫຍດຈາກຜູ້ຖືກເຄາະຮ້າຍທີ່ເປັນເພດຊາຍ ແລະ ເດັກຊາຍຄົນລາວໂດຍນຳໃຊ້ເປັນແຮງງານບັງຄັບໃນວຽກງານປະມົງໃນປະເທດໄທ ລວມທັງຂົງເຂດວຽກງານກໍ່ສ້າງ ແລະ ອຸດສາຫະກຳການກະເສດ. ລາຍງານວ່າຍັງມີເຈົ້າໜ້າທີ່ທ້ອງຖິ່ນບາງຄົນ ມີສ່ວນຮ່ວມໃນການສ້າງຊ່ອງว่างໃຫ້ຂະບວນການຄ້າມະນຸດໂດຍການຮັບເອົາຄ່າຈ້າງເພື່ອອຳນວຍຄວາມສະດວກໃຫ້ແກ່ການຂ້າມແດນຂອງພວກເດັກຍິງເພື່ອເດີນທາງໄປປະເທດຈີນ.

ຜູ້ຖືກເຄາະຮ້າຍທີ່ເປັນຄົນລາວ ໂດຍສະເພາະແມ່ນມາຈາກພາກໃຕ້ຂອງປະເທດ ສ່ວນໃຫຍ່ມັກຈະເດີນທາງໄປຕ່າງປະເທດເພື່ອຊອກຫາໂອກາດ ເຊິ່ງພວກເຂົາຖືກຂູດຮີດທາງດ້ານແຮງງານ ຫຼື ທາງເພດໃນປະເທດປາຍທາງ. ຜູ້ຖືກເຄາະຮ້າຍຈຳນວນໜຶ່ງ ຂ້າມແດນດ້ວຍຄວາມຊ່ວຍເຫຼືອຂອງນາຍໜ້າທີ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ຖືກກົດໝາຍ ເຊິ່ງຮຽກຄ່າທຳນຽມຈາກພວກເຂົາ, ໃນຂະນະທີ່ຜູ້ອື່ນໆ ຂ້າມແດນດ້ວຍຕົນເອງຜ່ານດ່ານຊາຍແດນທາງການຂອງ ສປປ ລາວ ຈຳນວນ 101 ແຫ່ງ ໂດຍນຳໃຊ້ເອກະສານເດີນທາງຢ່າງຖືກຕ້ອງ. ເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງຂັ້ນແຂວງ ຫຼື ດ່ານຊາຍແດນຫຼາຍແຫ່ງຂອງລາວ ອາດຍັງບໍ່ໄດ້ຮັບການຝຶກອົບຮົມຢ່າງພຽງພໍ ແລະ ມີເວລາປະຕິບັດງານທີ່ຈຳກັດ ຈຶ່ງເຮັດໃຫ້ດ່ານຊາຍແດນເຫຼົ່ານີ້ກາຍເປັນຈຸດຜ່ານທີ່ງ່າຍດາຍສຳລັບພວກຄ້າມະນຸດ. ບຸກຄົນທີ່ໃຫ້ບໍລິການຂົນສົ່ງໃກ້ຊາຍແດນປະເທດໄທ ອຳນວຍຄວາມສະດວກໃນການຈັດວາງຜູ້ເຄື່ອນຍ້າຍຖິ່ນຖານເພື່ອວັດຖຸປະສົງທາງທຸລະກິດ ໃຫ້ເຂົ້າສູ່ຂະບວນການຄ້າມະນຸດເພື່ອການຂູດຮີດແຮງງານ ຫຼື ທາງເພດໃນປະເທດໄທ. ພວກຄ້າມະນຸດທີ່ເປັນຄົນຕ່າງປະເທດ ຮ່ວມມືກັບພໍ່ຄ້າຄົນກາງຄົນລາວໃນທ້ອງຖິ່ນຫຼາຍຂຶ້ນເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າມະນຸດ. ບາງຄັ້ງ, ຄົນຂັບລົດບາງຄົນຍັງສວຍໂອກາດກັບແຮງການທີ່ຈະກັບຄືນປະເທດລາວ ແລະ ບາງເທື່ອກໍ່ສົ່ງພວກເຂົາກັບຄືນສູ່ການຖືກຄ້າມະນຸດນຳອີກ. ຜູ້ຄ້າມະນຸດໃນຊົນນະບົດ ມັກຈະຕົວະຍົວະຄົນຮູ້ຈັກ ແລະ ຍາດພີ່ນ້ອງ ໂດຍສັນຍາວ່າຈະຊອກຫາວຽກເຮັດງານທຳທີ່ຖືກກົດໝາຍໃນປະເທດເພື່ອນບ້ານ, ຫຼັງຈາກນັ້ນກໍ່ບັງຄັບໃຊ້ແຮງງານ ຫຼື ບັງຄັບໃຫ້ຂາຍບໍລິການທາງເພດ. ໂດຍສະເພາະເດັກນ້ອຍຊົນນະບົດທຸກຍາກ ຍິ່ງມີຄວາມສ່ຽງຫຼາຍ. ນັກຮຽນສ່ວນໃຫຍ່ບໍ່ຢາກສືບຕໍ່ການສຶກສາ ໂດຍສະເພາະ ຍ້ອນວ່າດຽວນີ້ອາຍຸທີ່ສາມາດເຮັດວຽກຖືກຕ້ອງຕາມກົດໝາຍແມ່ນ 14 ປີ ແລະ ເຂົາເຈົ້າມັກຖືກຍົວະວ່າ ໄດ້ຮັບຄ່າແຮງຫຼາຍກວ່າ ຖ້າໄປຢູ່ຕ່າງປະເທດ.

ບັນດາແຮງງານຕ່າງປະເທດ ແລະ ລາວ ພາຍໃນ ຫຼື ຢູ່ໃກ້ສວນກະສິກຳ, ເຂດໂຄງການສ້າງເສັ້ນທາງລົດໄຟ ແລະ ເຂດເສດຖະກິດພິເສດ ມີຄວາມສ່ຽງທີ່ຈະຖືກນຳໃຊ້ເປັນແຮງງານບັງຄັບ ແລະ ຂູດຮີດທາງເພດ. ມີລາຍງານວ່າ ເຂດເສດຖະກິດພິເສດບໍ່ເຕນມີບ່ອນຄ້າປະເວນີເພີ່ມຂຶ້ນ. ນອກຈາກນີ້, ຍັງເຫັນມີຄົນພະມ້າຈຳນວນໜຶ່ງທີ່ເຮັດວຽກເປັນຜູ້ໃຊ້ແຮງງານ ແລະ ຍັງອາໄສຄ້າປະເວນີໃນບໍລິເວນໃກ້ກັບພື້ນທີ່ບໍລິເວນ “ສາມຫ່ຽມທອງຄຳ” - ເປັນພື້ນທີ່ທາງພູມີສາດທີ່ຖືກສ້າງເຄື່ອງໝາຍໂດຍຈຸດຕັດກັນຂອງຊາຍແດນລະຫ່ວາງສາມປະເທດລາວ, ພະມ້າ ແລະ ໄທ - ເຊິ່ງພວກເຂົາເຫຼົ່ານັ້ນ ອາດຈະເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດ ກໍ່ເປັນໄດ້. ພວກຄ້າມະນຸດ ຂູດຮີດຜູ້ຖືກເຄາະຮ້າຍທີ່ເປັນຜູ້ຍິງ ແລະ ເດັກຍິງຄົນຫວຽດນາມ, ຈີນ ແລະ ລາວ ຜ່ານຮູບແບບການຄ້າມະນຸດເພື່ອການຂູດຮີດທາງເພດໃນບັນດາຕົວເມືອງໃຫຍ່ຕ່າງໆ ແລະ ໃນເຂດພື້ນທີ່ໃກ້ຊາຍແດນ, ບ່ອນຫຼິ້ນການພະນັນ (ຄາຊິໂນ) ແລະ ເຂດເສດຖະກິດພິເສດ ໂດຍສະເພາະ ແມ່ນເຂດພື້ນທີ່ທີ່ມີການລົງທຶນຢ່າງຫຼວງຫຼາຍຂອງນັກທຸລະກິດຈີນ, ມີລາຍງານວ່າເຂດພື້ນທີ່ເຫຼົ່ານີ້ສາມາດຕອບສະໜອງຕໍ່ຄວາມຕ້ອງການ ແລະ ເປັນບ່ອນດຶງດູດນັກທ່ອງທ່ຽວອາຊີ ແລະ ບັນດາແຮງງານເຄື່ອນຍ້າຍ. ອີງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານຈຳນວນໜຶ່ງ ຄາດຄະເນວ່າ ມີປະມານ 13,000 ຄົນທີ່ຄ້າປະເວນີໃນສະຖານປະກອບການຂອງ ສ ປປ ລາວ ແລະ ພວກເຂົາເຫຼົ່ານີ້ມີຄວາມເປັນໄປໄດ້ທີ່ຈະຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດເພື່ອການຂູດຮີດທາງເພດ, ໃນນີ້ຄາດວ່າມີຈຳນວນສາມເທົ່າຂອງຕົວເລກຂ້າງເທິງນີ້ ທີ່ກຳລັງປະກອບການຄ້າປະເວນີໃນ

ຮູບແບບອິດສະຫຼະໃນທົ່ວປະເທດ. ລາຍງານຍັງລະບຸໄວ້ວ່າ ນັກທ່ອງທ່ຽວຈາກປະເທດອັງກິດ, ອິດສະຕາລີ ແລະ ອາເມລິກາ ໄດ້ເດີນທາງເຂົ້າມາປະເທດລາວ ເພື່ອຂູດຮີດທາງເພດຕໍ່ເດັກ, ແລະ ຄົນເກົາຫຼີເໜືອທີ່ເຮັດວຽກຢູ່ໃນ ສປປ ລາວ ກໍ່ອາດມີຈຳນວນຫນຶ່ງທີ່ຖືກບັງຄັບໃຫ້ມີເຮັດວຽກແຮງງານຈາກລັດຖະບານເກົາຫຼີເໜືອ.